# ມິຊຊາອາທິດທີ 32 ກຳນົດທຳມະດາ ປີ B
# ວັນອາທິດທີ 11 ພະຈິກ 2018



**ພຣະວໍລະສານໂດຍນັກບຸນມາກໂກ 12, 41-44**

ໃນເວລາພຣະເຢຊູເຈົ້າຊົງປະທັບຢູ່ຫ້ອງພຣະຄັງ. ພຣະອົງຊົງທອດພຣະເນດເຫັນຝູງຊົນມາປ່ອນເງິນໃສ່ຕູ້ທານ. ພວກຮັ່ງມີກໍປ່ອນໃສ່ຢ່າງຫລວງຫລາຍ. ມີນາງໝ້າຍຜູ້ໜຶ່ງທານສອງຫລຽນ. ພຣະເຢຊູເຈົ້າຈຶ່ງຮຽກພວກສາວົກເຂົ້າມາກ່າວວ່າ: ເຮົາບອກພວກເຈົ້າເປັນຄວາມຈິງວ່າ ນາງໝ້າຍທຸກຈົນຜູ້ນີ້ໄດ້ໃຫ້ທານຫລາຍກວ່າໝົດທຸກຄົນ. ຍ້ອນວ່າຄົນທັງຫລາຍໄດ້ເອົາຂອງເຫລືອໃຊ້ມາທານ; ສ່ວນນາງໝ້າຍນີ້ເປັນຄົນຂາດເຂີນ, ນາງໄດ້ເອົາເງິນທີ່ນາງມີຢູ່ທັງໝົດເພື່ອລ້ຽງຊີວິດຂອງນາງມາທານ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 12, 41-44**

ຊີວິດການເປັນຢູ່ແລະສັງຄົມໃນສະໄໝກ່ອນພຣະເຢຊູເຈົ້າຈົນເຖິງສະໄໝຂອງພຣະອົງແລະເປັນຕົ້ນໃນຍຸກຂອງພວກເຮົານີ້ລ້ວນແຕ່ມີຈຸດທີ່ຄ້າຍຄືກັນ. ແລະຈຸດທີ່ຄ້າຍຄືກັນນີ້ແມ່ນຄວາມແຕກຕ່າງລະຫວ່າງຄົນຮັ່ງມີແລະຄົນທຸກຈົນ. ແລະຍິ່ງໄປກວ່ານັ້ນຄືການດຳລົງຊີວິດແບບເອກະເທດແລະພໍພຽງສຳລັບຕົວເອງຊຶ່ງນຳໄປສູ່ການເຫັນແກ່ຕົວແລະຂາດຄວາມຮັກ. ດັ່ງທີ່ພວກເຮົາສຳພັດໄດ້ໃນບົດອ່ານທີ່ໜຶ່ງ, ຊຶ່ງເລົ່າເຖິງຊີວິດຂອງນາງໝ້າຍຜູ້ໜຶ່ງຢູ່ເມືອງຊາແລັບຕາ, ໃນສະໄໝຂອງປະພາສົກເອລີ. ນາງໝ້າຍຜູ້ນີ້ບໍ່ພຽງແຕ່ເປັນຄົນທຸກດ້ານຊີວິດຄອບຄົວຍ້ອນນາງໄດ້ສູນເສຍສາມີໄປ. ແຕ່ນາງຍັງມີຄວາມທຸກດ້ານຊີວິດສັງຄົມອີກດ້ວຍເພາະບໍ່ໃຜຊ່ວຍແບ່ງເບົາໃນການທຳມາຫາກິນລ້ຽງຊີບໃຫ້ນາງແລະລູກຂອງນາງ. ແລະຍິ່ງໄປກວ່ານັ້ນອີກຍັງມີປະພາສົກເອລີມາຂໍນາງແບ່ງປັນສະບຽງອາຫານກັບນາງໝ້າຍຄົນນີ້ອີກ. ຕໍ່ໜ້າຄວາມອັດຕະຄັດດັ່ງກ່າວແທນທີ່ນາງໝ້າຍນີ້ຈະປະຕິເສດທີ່ຈະແບ່ງປັນອາຫານໃຫ້ກັບປະພາສົກເອລີເພື່ອຮັກສາຊີວິດຂອງຕົນແລະລູກຂອງຕົນໄວ້, ນາງພັດຍອມເສຍສະຫລະຄາບເຂົ້າສຸດທ້າຍໃນຊີວິດຂອງນາງແລະລູກຂອງນາງໃຫ້ກັບປະພາສົກເອລີ. ແລະສິ່ງທີ່ຕາມມາແມ່ນຫຍັງ? ແທນທີ່ສະບຽງອາຫານຈະໝົດ ພັດມີຫລາຍກວ່າເກົ່າ. ແທນທີ່ນາງໝ້າຍແລະລູກນາງຈະຕາຍ, ພັດສືບຕໍ່ມີຊີວິດ. ຍ້ອນຫຍັງ? ຍ້ອນນາງໝ້າຍນີ້ໄດ້ເຊື່ອໃນວາຈາຂອງພຣະເຈົ້າຜ່ານທາງປະພາສົກເອລີ ແລະວາຈາອັນຊົງຊີວິດນີ້ໄດ້ໃຫ້ນາງແລະລູກຂອງນາງມີຊີວິດ.

ນາງໝ້າຍໃນພຣະວໍລະສານຊຶ່ງພຣະເຢຊູເຈົ້າພົບໃນຫ້ອງຄັງທີ່ເມືອງເຢລູຊາແລມກໍເຊັ່ນດຽວກັນ. ນາງໄດ້ໃຫ້ທານຈຳນວນເງິນທີ່ນາງມີເພື່ອລ້ຽງຊີບຂອງຕົນຢ່າງບໍ່ຄິດຄຳນວນເຖິງຊີວິດຂອງຕົນ. ການທານຂອງນາງໝ້າຍນີ້ສະແດງອອກເຖິງຄວາມໄວ້ວາງໃຈໃນຜູ້ທີ່ນາງທານຄືພຣະເຈົ້າ. ການທານນີ້ສະແດງວ່ານາງເຊື່ອວ່າພຣະເຈົ້າຈະບໍ່ໃຫ້ນາງຕ້ອງຂາດເຂີນແລະຕາຍ. ສ່ວນການໃຫ້ທານຂອງຄົນຮັ່ງມີເປັນການທານຢ່າງຄິດໄລ່ຄຳນວນ. ເພາະພວກເຂົາໃຫ້ໃນສິ່ງທີ່ພວກເຂົາເຫລືອໃຊ້. ເພາະພວກເຂົາໃຫ້ເພື່ອອວດອ້າງເຖິງຄວາມຮັ່ງມີຂອງເຂົາ. ເພາະພວກເຂົາໃຫ້ຍ້ອນຢາກໃຫ້ພຣະເຈົ້າໃຫ້ພວກເຂົາສືບຕໍ່ຮັ່ງມີຫລາຍຂຶ້ນ. ການທານຂອງພວກເຂົາຈຶ່ງປຽບເໝືອນການແລກປ່ຽນຊື້ຂາຍກັບພຣະເຈົ້າ. ສ່ວນນາງໝ້າຍນີ້, ນາງທານດ້ວຍໃຈ, ດ້ວຍຄວາມຮັກ. ເພາະສະນັ້ນພຣະເຢຊູເຈົ້າຈຶ່ງກ່າວກັບພວກລູກສິດວ່າ: ນາງໝ້າຍນີ້ໄດ້ໃຫ້ຫລາຍກວ່າຄົນອື່ນ. ເພາະບໍ່ມີການໃຫ້ແລະຄວາມຮັກໃດຍິ່ງໃຫຍ່ເທົ່າການສະຫລະຊີວິດຂອງຕົນເພື່ອຄົນທີ່ເຮົາຮັກ. ແລະຜູ້ທີ່ກະທຳໄດ້ແບບນີ້ຄືອົງພຣະເຢຊູກຣິສໂຕເຈົ້າ. ພຣະອົງໄດ້ໃຫ້ພວກເຮົາແມ່ນກະທັ້ງຊີວິດຂອງພຣະອົງເອງເພື່ອເປັນຄ່າໄຖ່ບາບຂອງພວກເຮົາ. ແລະເປັນຕົ້ນເພື່ອໃຫ້ພວກເຮົາມີຊີວິດດ້ວຍການຕາຍຂອງພຣະອົງ.

ສ່ວນພວກເຮົາຜູ້ເປັນລູກສິດຂອງພຣະເຢຊູເຈົ້າ, ພວກເຮົາໄດ້ໃຫ້ພຣະອົງຫຍັງແນ່ບໍ? ພວກເຮົາໄດ້ຊ່ວຍເຫລືອເພື່ອນພີ່ນ້ອງຂອງພວກເຮົາຫຍັງບໍ? ການໃຫ້ແລະການທານຂອງພວກເຮົາໃນແຕ່ລະຄັ້ງເປັນການໃຫ້ຢ່າງຈິງໃຈບໍ?

ຄຸນພໍ່ ອັງຕວນ ກຽດຕິສັກ